ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ຖນ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

ນະຄອນຫຼວງວຽງຈັນ,**ວັນທີ 15 ພຶດສະພາ 2023**

"ນັກສຶກສາຈາກ ສະຖາບັນບັນການທະນາຄານ ລຸ້ນທີ່ 2 ໄດ້ສຳເລັດການລົງຝຶກງານ ກັບ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ"

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຮ່ວມກັບ ສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ ຈັດໃຫ້ມີການຝຶກງານຂອງນັກສຶກສາຈາກສະຖາບັນ ຮຸ້ນທີ່ 2 ຈຳນວນ 8 ຄົນ ລົງຝຶກງານທີ່ ບໍລິສັດ ມະຫະທຶນ ເພື່ອໃຫ້ນັກສຶກສາສາມາດໃຊ້ວິຊາຄວາມຮູ້ທີ່ຮຽນມາ ຝຶກທັກສະໃຫ້ສອດຄ່ອງກັບການປະຕິບັດວຽກງານຕົວຈິງ ແລະ ຈຸດປະສົງໜຶ່ງ ເພື່ອສົ່ງເສີມສ້າງວຽກເຮັດງານທຳໃຫ້ນັກສຶກສາສະຖາບັນການທະນາຄານ ທີ່ມີຄວາມຮູ້ຄວາມ ສາມາດສອດຄ່ອງກັບການເຮັດວຽກຂອງ ບໍລິສັດ ມະຫະທຶນ ໄດ້ມີວຽກເຮັດງານທຳທີ່ເໝາະສົມກັບຄວາມສາມາດຂອງ ຕົນ. ໂຄງການນີ້ ເປັນການຮ່ວມມືກັນລະຫວ່າງ 2 ສະຖາບັນ ຊຶ່ງເປັນ ໂຄງການ "**ວ່າດ້ວຍການຮ່ວມມືດ້ານວິຊາການ**" ເພື່ອຈະແລກປ່ຽນຖອດຖອນບົດຮຽນທາງດ້ານວິຊາການ ແລະ ເປີດໂອກາດໃຫ້ນັກສຶກສາທີ່ຮຽນຢູ່ ສະຖາບັນການ ທະນາຄານ ທານະຄານແຫ່ງ ສ ປປ ລາວ ລະຫວ່າງ ວັນທີ 06 ມີນາ 2023 ຈົນຮອດ ວັນທີ 05 ພຶດສະພາ 2023





ບໍລິສັດ ມະຫະທຶນ ຂໍສະແດງຄວາມຍິນດີ ກັບນັກສຶກສາທັ້ງ 8 ຄົນ ທີ່ຜ່ານການຝຶກງານ ແລະ ປະຕິບັດວຽກງານ ຕົວຈິງໄດ້ຢ່າງດີ ແລະ ຂໍໃຫ້ນັກສຶກສາທຸກຄົນປະສົບຄວາມສຳເລັດໃນອານາຄົດ